# Ali-Lanza

**Generic name:** Losartan potassium tablets
**Brand Name:** Ali-Lanza
**Composition:**
Losartan potassium..............................................50mg
**Indications:**
Losartan potassium tablet is an angiotensin II receptor blocker (ARB) indicated for:

- Treatment of hypertension, to lower blood pressure in adults and children greater than 6 years old of age who weigh between 20–50kg or more.
- Reduction of the risk of stroke in patients with hypertension and left ventricular hypertrophy.
- prevent of diabetic nephropathy with an elevated serum creatinine and proteinuria in patients with type 2 diabetes and a history of hypertension.

**Dosage:**
Hypertension

- Usual adult dose: 50mg once daily or increase to 100mg once daily.
- Usual pediatric who weigh between 20–50kg or more starting dose: 0.7mg per kg once daily (up to 50mg).

Hypertensive Patients with Left Ventricular Hypertrophy

- Usually starting dose: 50mg once daily.
- Add hydrochlorothiazide 12.5mg or increase losartan potassium tablets to 100mg followed by an increase to hydrochlorothiazide 25mg if further blood pressure response is needed.

Nephropathy in Type 2 Diabetic Patients

- Usual dose: 50mg once daily.
- Increase dose to 100mg once daily if further blood pressure response is needed.

**Contraindications:**

- Hypersensitivity to any component.
- Coadministration with aliskiren in patients with diabetes.

**Warning:**

- Hypotension: Correct volume or salt depletion prior to administration of losartan potassium tablets.
- Monitor renal function and potassium in susceptible patients.
- Fetal Toxicity: losartan potassium can cause fetal harm when administered to a pregnant woman.

**Adverse Effects:**

- Most common adverse reactions (incidence ≥2% and greater than placebo) are dizziness, upper respiratory infection, nasal congestion, and back pain.

**Dosage form:** White tablet, round.
**Expire date:** 36 months from the date of manufacture.
**Packaging:** 10 tablets/blister, 3 blisters/box.
**Storage:**

- Protect from light, seal, and store in a dry place below 30℃.

**Manufactured by:**
Alliance Pharmaceutical Co., Ltd
Simanoneua Village, Hadxayfong District, Vientiane, Lao PDR
Tel: +856-21-612 727
www.alliancepharmagroup.com

# ເອກະສານກຳກັບຢາ
## Ali-Lanza

**ຊື່ທົ່ວໄປ:** Losartan potassium Tablets
**ຊື່ການຄ້າ:** Ali-Lanza
**ສ່ວນປະກອບ:**
Losartan potassium.............................................................50mg
**ຂໍ້ບົ່ງໃຊ້:**
ຢາເມັດ Losartan potassium ເປັນຢາຕ້ານຕໍ່ຕົວຮັບ angiotensin II (ARB) ນຳໃຊ້ສຳລັບ:
- ປິ່ນປົວຄວາມດັນເລືອດສູງ ໃນຄົນເຈັບຜູ້ໃຫຍ່ ແລະ ເດັກນ້ອຍ ອາຍຸຫຼາຍກວ່າ 6 ປີ ທີ່ມີນ້ຳໜັກຕົວ 20-50kg ຂຶ້ນໄປ.
- ຫຼຸດຄວາມສ່ຽງຂອງພະຍາດເສັ້ນເລືອດໃນສະໝອງ ສຳລັບຄົນເຈັບທີ່ເປັນພະຍາດຄວາມດັນເລືອດສູງ ແລະ ອາການຫົວໃຈໃຫຍ່ຂອງຫ້ອງລຸ່ມເບື້ອງຊ້າຍ.
- ປ້ອງກັນໝາກໄຂ່ຫຼັງຊຸດໂຊມ ໃນຄົນເຈັບທີ່ເປັນພະຍາດເບົາຫວານຊະນິດທີ 2, ທີ່ກວດພົບວ່າມີລະດັບທາດ Creatinine ໃນເລືອດສູງ ທີ່ມີປະຫວັດຄວາມດັນເລືອດສູງ.

**ວິທີໃຊ້:**
ຄວາມດັນເລືອດສູງ:
- ປະລິມານຢາປົກກະຕິສຳລັບຜູ້ໃຫຍ່: 50mg ຕໍ່ມື້ ຫຼື ສາມາດເພີ່ມເປັນ 100mg ມື້ລະເທື່ອ.
- ປະລິມານຢາເລີ່ມຕົ້ນປົກກະຕິສຳລັບເດັກນ້ອຍທີ່ມີນ້ຳໜັກຕົວ 20-50kg ຂຶ້ນໄປ: 0.7mg ຕໍ່ນ້ຳໜັກ 1 kg, ຕໍ່ມື້ (ສູງສຸດ 50mg).

ຄົນເຈັບຄວາມດັນເລືອດສູງທີ່ມີອາການຫົວໃຈໃຫຍ່ຂອງຫ້ອງລຸ່ມເບື້ອງຊ້າຍ:
- ປະລິມານຢາເລີ່ມຕົ້ນປົກກະຕິ: 50mg ຕໍ່ມື້.
- ເພີ່ມ hydrochlorothiazide 12.5mg ຫຼື ຖ້າຕ້ອງການໃຫ້ຕອບສະໜອງຄວາມດັນເລືອດຕື່ມ ແມ່ນເພີ່ມປະລິມານຢາເມັດ Losartan potassium ແທນເປັນ 100mg, ຕິດຕາມດ້ວຍການເພີ່ມປະລິມານຢາ hydrochlorothiazide 25mg.

ພາວະໝາກໄຂ່ຫຼັງຊຸດໂຊມໃນຄົນເຈັບພະຍາດເບົາຫວານຊະນິດທີ 2:
- ປະລິມານຢາປົກກະຕິ: 50mg ຕໍ່ມື້.
- ຖ້າຕ້ອງການຫຼຸດຄວາມດັນເລືອດເພີ່ມຕື່ມ ແມ່ນສາມາດເພີ່ມປະລິມານຢາເປັນ 100mg ຕໍ່ມື້.

**ຂໍ້ຫ້າມໃຊ້:**
- ຫ້າມໃຊ້ໃນຜູ້ທີ່ມີອາການແພ້ຕໍ່ສ່ວນປະກອບໃນຕົວຢາ.
- ຫ້າມໃຊ້ຢາຮ່ວມກັບ Aliskiren ໃນຄົນເຈັບທີ່ເປັນພະຍາດເບົາຫວານ.

**ຄຳເຕືອນ:**
- ຄວາມດັນເລືອດຕ່ຳ: ຄວນປັບປຸງການຂາດນ້ຳ ຫຼື ປະລິມານທາດເກືອແຮ່ໃຫ້ຖືກຕ້ອງກ່ອນການໃຊ້ຢາ Losartan potassium.
- ຕິດຕາມປະເມີນການທຳງານຂອງໝາກໄຂ່ຫຼັງ ແລະ ລະດັບທາດ Potassium ໃນຄົນເຈັບທີ່ມີຄວາມຮູ້ສຶກໄວຕໍ່ຢາ.
- ເປັນພິດຕໍ່ເດັກນ້ອຍໃນທ້ອງ: ຢານີ້ອາດເປັນອັນຕະລາຍຕໍ່ເດັກນ້ອຍໃນທ້ອງໄດ້ ຖ້ານຳໃຊ້ໃນແມ່ຍິງຖືພາ.

**ຜົນຂ້າງຄຽງ:**
- ອາການຂ້າງຄຽງທີ່ພົບເລື້ອຍໆ (≥2%) ແລະ ຫຼາຍກວ່າກຸ່ມທີ່ໄດ້ຮັບຢາຫຼອກໄດ້ແກ່: ວິນຫົວ, ຕິດເຊື້ອໃນທາງເດີນຫາຍໃຈເບື້ອງເທິງ, ຕັນດັງ ແລະ ປວດຫຼັງ.

**ຮູບແບບຂອງຢາ:** ຢາເມັດມົນສີຂາວ.
**ຂະໜາດບັນຈຸ:** ບັນຈຸໃນກັບ, 1 ກັບມີ 3 ແຜງ, 1 ແຜງມີ 10 ເມັດ.
**ວັນໝົດອາຍຸ:** 36 ເດືອນ ຫຼັງຈາກວັນທີຜະລິດ.
**ການເກັບຮັກສາ:**
- ເກັບຮັກສາໄວ້ໃນກ່ອງບັນຈຸເດີມ, ປິດສະໜິດ, ໃນທີ່ແຫ້ງ, ເກັບຮັກສາໄວ້ໃນອຸນຫະພູມຕ່ຳກວ່າ 30°C.

**ຜະລິດໂດຍ:**
ບໍລິສັດ ພັນທະມິດຟາມາຊູຕິຄໍ ຈຳກັດ
ສະຖານທີ່: ບ້ານ ສີມມະໂນເໜືອ, ເມືອງ ຫາດຊາຍຟອງ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: +856-21-612 727
www.alliancepharmagroup.com